

# ເຮືອນຮົ່ມ

ສາມາດຊອກອ່ານເນື້ອໃນສະບັບເຕັມໄດ້ທີ່: http://bit.do/laos-shed

ໃນຊ່ວງປີທີ່ຜ່ານມາ, ຊາວສວນໄດ້ຮູ້ຈັກກັບເຮືອນຮົ່ມໃນນາມວ່າເປັນເຮືອນປູກຜັກໃນຊ່ວງລະດູຝົນ ເພາະມັນມຸງຫລັງຄາດ້ວຍຜ້າຢາງໃສ. ເຖິງຢ່າງໃດກໍ່ຕາມ, ການນຳໃຊ້ຜ້າຢາງ ແມ່ນເຮັດໃຫ້ອຸນນະພູມພາຍໃນເຮືອນຮົ່ມສູງ, ເຊິ່ງບໍ່ແທດເໝາະກັບບາງພື້ນທີ່ຂອງປະເທດລາວ ທີ່ມີອາກາດຮ້ອນຕະຫຼອດປີ. ນອກຈາກນີ້, ການເຮັດເຮືອນຮົ່ມດ້ວຍຜ້າຢາງແມ່ນຂ້ອນຂ້າງແພງເມື່ອທຽບໃສ່ຈຸດປະສົງທີ່ນຳມາໃຊ້ກັນຝົນພຽງຢ່າງດຽວ.

ເພື່ອຫຼຸດຜ່ອນຄວາມຮ້ອນ ແລະ ສ້າງຄວາມຫຼາກຫຼາຍໃນການນຳໃຊ້ເຮືອນຮົ່ມ, ເຄືອຂ່າຍຊາວກະສິກອນລາວໄດ້ນຳໃຊ້ພູມປັນຍາທ້ອງຖິ່ນ ເພື່ອພັດທະນາເຮືອນຮົ່ມໂດຍການໃຊ້ວັດສະດຸທີ່ແຕກຕ່າງ. ຂະໜາດເຮືອນຮົ່ມກວ້າງ 8 ແມັດ, ຍາວ 30 ແມັດ, ຫຼັງຄາ ແລະ ຝາອ້ອມຮອບດ້ວຍຕາໜ່າງຢ່າງດີ. ພາຍໃນເຮືອນຮົ່ມຈະມີ ໜານຜັກ 4 ໜານ ຍາວໄປຕາມລວງ ແລະ ຄວາມກວ້າງ 1 ແມັດ. ເຊິ່ງຍົກສູງຂຶ້ນຈາກພື້ນປະມານ 60 ຊມ ເພື່ອສ້າງໃຫ້ພື້ນທີ່ກ້ອງໜານຜັກເປັນບ່ອນລ້ຽງສັດເຊັ່ນ: ລ້ຽງເປັດ ຫຼື ກົບເປັນຕົ້ນ. ເທັກນິກນີ້ໄດ້ຖືກທົດລອງໃຊ້ທີ່ບ້ານເຊໂຮງ, ເມືອງໂຂງ, ແຂວງຈະປາສັກ.

ນາງ ສອນ, ຫົວໜ້າກຸ່ມຜູ້ຜະລິດກະສິກຳເຊໂຮງ ໄດ້ເວົ້າວ່າລາວບໍ່ເຄີຍລອງໃຊ້ເທັກນິກນີ້ມາກ່ອນ. ໃນອາດີດ, ລາວປູກຜັກໃສ່ພາຊະນະທີ່ແຕກເຊິ່ງມັນກໍ່ໄດ້ຜົນດີ, ແຕ່ລາວບໍ່ເຄີຍຄິດວ່າລາວຈະສາມາດປູກຜັກໃນພື້ນທີ່ໆໃຫຍ່ແບບນີ້.ສອນໄດ້ປູກຜັກຫຼາກຫຼາຍຊະນິດ ໃນຂະນະນັ້ນກໍ່ລ້ຽງເປັດໄປນຳຈຳນວນ 100 ໂຕໃນເຮືອນຮົ່ມຫຼັງດຽວ ເປັນເວລາ 3 ເດືອນ. ສອນເວົ້າວ່າ: *“ຂ້ອຍຫາເງິນຈາກການຂາຍຜັກໄດ້ 100 ໂດລາ ແລະ ຈາກການຂາຍເປັດອີກ 600 ໂດລາ, ເຊິ່ງທັງຜັກ ແລະ ເປັດແມ່ນໄດ້ຈາກການປູກ ແລະ ລ້ຽງໃນ ເຮືອນຮົ່ມຫຼັງດຽວກັນ”.*

ທ່ານ ຄຳມູນ ປະທານເຄືອຂ່າຍຊາວກະສິກອນລາວ ໄດ້ເວົ້າວ່າ: *“ຕາມປົກະຕິເຮືອນຮົ່ມຈະມີອາກາດຮ້ອນເພາະມຸງດ້ວຍຜ້າຢາງໃສ ເຮັດໃຫ້ພືດຜັກບໍ່ສາມາດເຕີບໃຫຍ່ໄດ້ດີເທົ່າທີ່ຄວນ. ຈາກເທັກນິກງ່າຍໆນີ້, ຊາວສວນຫຼາຍຄົນສາມາດປູກພືດຜັກໄດ້ຕະຫຼອດປີດ້ວຍອຸນນະພູມທີ່ເໝາະສົມ ໃນຂະນະດຽວກັນຍັງສາມາດລ້ຽງເປັດໃນເຮືອນຮົ່ມຫຼັງດຽວນີ້ໄດ້ນຳ”.*

ສະຫຼຸບແລ້ວ, ເຮືອນຮົ່ມແບບມຸງຕາຂ່າຍແມ່ນມີຂໍ້ດີຫຼາຍຢ່າງເຊັ່ນ: ໃຊ້ງົບໃນການສ້າງຖືກກວ່າ, ອຸນນະພູມພາຍໃນເຮືອນຮົ່ມແມ່ນປົກະຕິບໍ່ຮ້ອນເກີນໄປ ເໝາະສຳລັບການປູກພືດຜັກ ແລະ ລ້ຽງສັດ, ຊາວສວນສາມາດປູກພືດປັກໃນເຮືອນຮົ່ມໃນຍາມລະດູຝົນ, ແມງໄມ້ບໍ່ສາມາດເຂົ້າມາທຳລາຍພືດຜັກໃນເຮືອນຮົ່ມໄດ້.

ຈັດຕັ້ງປະຕິບັດໂດຍ:
Organized by:

ສະໜັບສະໜູນໂດຍ:
Supported by: